San Diego Unified School District
Fact Sheet

# ມີຫລາຍຢ່າງທີ່ພໍ່ແມ່ສາມາດຢຸດຢັ້ງຄວາມຮຸນແຮງຢູ່ໃນໂຮງຮຽນ

ສະພາປ້ອງກັນການກະທຳຜິດກົດຫມາຍແຫ່ງຊາດຂໍໃຫ້ຊ່ອຍຢຸດຢັ້ງຄວາມຮຸນແຮງຢູ່ໃນໂຮງຮຽນໃນບັນຊີຄວາມຄິດຕ່າງໆນີ້. ບາງຢ່າງຕ້ອງໄດ້ກະທຳສ່ວນບຸກຄົນ; ບາງຢ່າງຕ້ອງໄດ້ປະຕິບັດຮ່ວມກັນ. ບາງຢ່າງເປັນເລື້ອງຮີບດ່ວນກ່ອນຫມູ່. ບັນຫາອື່ນໆກໍ່ໃຫ້ເກີດຄວາມຮຸນແຮງ. ຈົ່ງພິຈາຣະນາເບິ່ງໃນບັນຊີເຫລົ່ານີ້– ຍັງມີຫລາຍໆຢ່າງທີ່ຈະຕ້ອງໄດ້ສຳເຣັດ.

1. ໃຫ້ຮັບຮູ້ວ່າການມີອາວຸດປືນຢູ່ໃນເຮືອນຂອງທ່ານນັ້ນ ເຮັດໃຫ້ສ່ຽງຕໍ່ກົດຫມາຍ ພ້ອມທັງເປີດໂອກາດໃຫ້ທ່ານ ແລະ ຄອບຄົວຂອງທ່ານສ່ຽງຕໍ່ການຖືກບາດເຈັບ. ໃນຫລາຍໆຣັຖ, ພໍ່ແມ່ເປັນຜູ້ຮັບຜິດຊອບຕໍ່ການກະທຳຂອງເດັກເຂົາເຈົ້າ, ຮວມທັງການໃຊ້ອາວຸດປືນທີ່ບໍ່ຖືກຕ້ອງເຫມາະສົມ. ຖ້າທ່ານເລືອກເກັບອາວຸດປືນໄວ້ໃນເຮືອນນັ້ນ, ຈົ່ງຮັບປະກັນວ່າມັນປິດລ໋ອກໄວ້ປອດພັຍດີ, ລູກກະສຸນເກັບລ໋ອກໄວ້ໃຫ້ດີ ແລະ ເກັບລ໋ອກແຍກກັນໄວ້, ແລະ ບອກເດັກໃຫ້ຮູ້ວ່າ ອາວຸດເຫລົ່ານີ້ຈະບໍ່ມີໃຜແຕະຕ້ອງຖ້າບໍ່ມີອະນຸຍາດ ແລະ ການກຳກັບດູແລຈາກທ່ານ.

2. ເຂົ້າຮ່ວມປະຕິບັດຫນ້າທີ່ຢ່າງເຂັ້ມແຂງຢູ່ໃນໂຮງຮຽນຂອງເດັກ. ໂອ້ລົມກັບຄຣູ ແລະ ພະນັກງານໂຮງຮຽນເປັນປະຈຳ. ອາສາສມັກຊ່ອຍວຽກຢູ່ໃນຫ້ອງຮຽນ ຫລື ຫ້ອງສມຸດ, ຫລື ຢູ່ໃນກິຈກັມຕ່າງໆຫລັງຈາກໂມງເລີກໂຮງຮຽນ. ຮ່ວມເຮັດວຽກກັບການຈັດຕັ້ງ ພໍ່ແມ່–ຄຣູ–ນັກຮຽນ.

3. ປະຕິບັດຕົນເປັນບຸກຄົນຕົວຢ່າງ. ລະງັບການບໍ່ເຂົ້າກັນຂອງທ່ານລົງດ້ວຍສັນຕິ ແລະ ຄວບຄຸມຈິດໃຈບໍ່ໃຫ້ມີຄວາມຮຸນແຮງ.

4. ຟັງ ແລະ ໂອ້ລົມກັບເດັກຂອງທ່ານເປັນປະຈຳ. ຊອກເບິ່ງຄວາມນຶກຄິດຂອງເຂົາເຈົ້າໃນທຸກໆເລື້ອງ. ກໍ່ສ້າງການໂອ້ລົມກັນແບບ–ສອງ–ທາງ, ຊຶ່ງອາດຫມາຍຄວາມວ່າບໍ່ມີການຕິຕຽນ ຫລື ຊີ້ຂາດ. ການໂອ້ລົມແບບນີ້ ຄວນເປັນນິສັຍປະຈຳວັນ, ເພື່ອບໍ່ໃຫ້ມີການກະທຳທີ່ຜິດກົດຫມາຍເກີດຂຶ້ນ.

5. ວາງຂໍ້ຈຳກັດກ່ຽວກັບການປະພຶດລ່ວງຫນ້າໄວ້ຢ່າງແຈ່ມແຈ້ງ. ສົນທະນາກ່ຽວກັບການໃຫ້ຣາງວັນ ແລະ ການລົງໂທດໄວ້ລ່ວງຫນ້າຄືກັນ. ການປະຕິບັດລະບຽບ ຕາມໂມງເຮັດວຽກ ແລະ ສມ່ຳສເມີນັ້ນ ຈະຊ່ອຍສິດສອນໃຫ້ເປັນຄົນມີລະບຽບ, ເປັນຄວາມຮູ້ໃຫ້ເດັກຂອງທ່ານໃຊ້ໄປຕລອດຊີວິດ.

6. ເວົ້າລົມກັບເດັກແຈ່ມແຈ້ງກ່ຽວກັບເລື້ອງຄວາມຮຸນແຮງ. ອະທິບາຍກັບການທີ່ທ່ານຮັບບໍ່ໄດ້ ແລະ ຈະບໍ່ໂຍະຍານກ່ຽວກັບການປະພຶດຮຸນແຮງນັ້ນ. ອະທິບາຍວ່າ ແມ່ນຫຍັງເປັນອັນຮຸນແຮງ ແລະ ອັນບໍ່ຮຸນແຮງ. ຕອບຄຳຖາມໃຫ້ທົ່ວຕລອດ. ຮັບຟັງຂໍ້ຄິດເຫັນ ແລະ ຂໍ້ຂ້ອງໃຈຕ່າງໆຂອງເດັກ. ເຂົາເຈົ້າອາດຈະຍົກບັນຫານ້ອຍໆຂຶ້ນມາເວົ້າ ຊຶ່ງແກ້ໄດ້ງ່າຍໆດຽວນີ້, ບັນຫານັ້ນອາດສາມາດກາຍເປັນບັນຫາໃຫຍ່ ຖ້າປະໄວ້ເປີດເຜີຍແກ້ໄຂແຕ່ມັນເປັນບັນຫານ້ອຍໆ.

7. ຊ່ອຍເດັກຂອງທ່ານຮຽນຮູ້ວິທີກວດກາ ແລະ ຊອກຫາທາງແກ້ໄຂບັນຫາ. ພວກເດັກທີ່ຮູ້ຈັກວິທີປະເຊີນກັບບັນຫາ ແລະ ຮູ້ວິທີແກ້ໄຂໄດ້ຢ່າງສະບາຍນັ້ນ ມັກມີນ້ອຍທີ່ສຸດທີ່ເດັກຈະໃຈຮ້າຍ, ຫມົດຫວັງ, ຫລື ມີຄວາມຮຸນແຮງ. ຍາດແຍ້ງເອົາ "ໂອກາດທີ່ສິດສອນໄດ້" ເພື່ອຊ່ອຍເດັກຂອງທ່ານເຂົ້າໃຈ ແລະ ນຳໃຊ້ຄວາມຮູ້ເຫລົ່ານີ້ ແລະ ຄວາມຮູ້ອື່ນໆໃຫ້ເປັນປະໂຍດແກ່ເຂົາເຈົ້າ.

## ຂໍ້ສລູບ

- ❖ ຖ້າທ່ານຈຳເປັນຕ້ອງມີປືນຢູ່ໃນເຮືອນນັ້ນ, ທ່ານຕ້ອງແນ່ໃຈວ່າໄດ້ປິດລ໋ອກ ແລະ ມ້ຽນແຍກກັນກັບລູກກະສຸນ/ລູກປືນ.
- ❖ ຮ່ວມປະຕິບັດຫນ້າທີ່ຢ່າງເຂັ້ມແຂງໃນໂຮງຮຽນຂອງເດັກທ່ານ.
- ❖ ທຳຫນ້າທີ່ເປັນບຸກຄົນຕົວຢ່າງ.
- ❖ ຟັງ ແລະ ໂອ້ລົມກັບເດັກຂອງທ່ານປະຈຳ.
- ❖ ວາງຂໍ້ຈຳກັດກ່ຽວກັບການປະພຶດໄວ້ລ່ວງຫນ້າຢ່າງແຈ່ມແຈ້ງ
- ❖ ບໍ່ຮັບເອົາ ຫລື ບໍ່ໂຍະຍານການປະພຶດທີ່ຮຸນແຮງ.
- ❖ ຫາຄຳຕອບຕ່າງໆ ເພື່ອແກ້ບັນຫາຄວາມຮຸນແຮງ ແລະ ການຫມົດຫາງອອກຂອງເດັກ.
- ❖ ບໍ່ຊຸກຍູ້ໃຫ້ມີການດ່າວ່າ, ເຍາະເຍີ້ຍ ແລະ ຂູ່ເຂັນກັນ.
- ❖ ຈຳນຳເລື້ອຍໆເພື່ອຢາກຮູ້ຈັກຫມູ່ຄູ່ຂອງເດັກທ່ານ, ວ່າພາກັນເຮັດຫຍັງ ແລະ ຢູ່ໃສ.
- ❖ ຊຸກຍູ້ພໍ່ແມ່ຄົນອື່ນໆ ເປັນຜູ້ດູແລຮັກສາກິຈກັມຕ່າງໆຢູ່ໃນໂຮງຮຽນ.
- ❖ ຊຸກຍູ້ສນັບສນຸນນະໂຍບາຍຕ່າງໆຂອງໂຮງຮຽນ.
- ❖ ເຂົ້າຮ່ວມກຸ່ມຈັດຕັ້ງຊຸມຊົນ ເພື່ອໂອ້ລົມສົນທະນາບັນຫາ ແລະ ຄວາມຫ່ວງໄຍຕ່າງໆທີ່ກ່ຽວຂ້ອງກັບຄວາມຮຸນແຮງ.

8. ບໍ່ຊຸກຍູ້ໃຫ້ມີການດ່າວ່າ, ເຍາະເຍີ້ຍ ແລະ ຂູ່ເຂັນກັນ. ການປະພຶດເຫລົ່ານີ້ສ່ວນຫລາຍມັກຈະພາໃຫ້ໄປສູ່ການຕ່ອຍຕີກັນ (ຫລື ຮ້າຍແຮງກວ່ານັ້ນ). ເຖິງວ່າຜູ້ຍອກເຍົ້ານັ້ນຈະຮຸນແຮງ ຫລື ບໍ່ຮຸນແຮງກໍ່ຕາມ, ແຕ່ຜູ້ຖືກເຍາະເຍີ້ຍອາດເຫັນຫົນທາງດຽວທີ່ຈະຢຸດຢັ້ງໄດ້ຄືໃຊ້ຄວາມຮຸນແຮງ.

–ມີຕໍ່–

9. ຈຳນຳເລື້ອຍໆເພື່ອຢາກຮູ້ຈັກໝູ່ຄູ່ຂອງເດັກ, ວ່າເຮັດຫຍັງ ແລະ ຢູ່ໃສ. ມັນເປັນສິດຂອງທ່ານ, ທີ່ຈະເຮັດໃຫ້ເຮືອນເປັນບ່ອນທີ່ໜ້າຢູ່ຮົ່ມຍານ ແລະ ຖືກອົກຖືກໃຈສຳຫລັບເດັກຂອງທານ ແລະ ໝູ່ຄູ່ຂອງເຂົາເຈົ້າ; ເມື່ອເຂົາເຈົ້າຢູ່ອ້ອມຂ້າງຂອງທານນັ້ນ ທານຈະຮູ້ງາຍວາເຂົາເຈົ້າພາກັນເຮັດຫຍັງ. ຮູ້ວິທີຈັບຈຸດການປະພຶດທີ່ສັບຍານການສ້າງບັນຫາຂອງເດັກ--ເດັກຂອງທານ ແລະ ເດັກຄົນອື່ນໆ.

10. ເຮັດວຽກຮ່ວມກັບພໍ່ແມ່ຄົນອື່ນໆເພື່ອກໍ່ສ້າງຂັ້ນມາຕຖານພືທີຖານຕ່າງໆກ່ຽວກັບໂຮງຮຽນ, ສະຖານທີ່ ແລະ ກິຈກັມຕ່າງໆທີ່ເໝາະສົມ–ທາງນອກໂຮງຮຽນ, ແລະ ຮຽກຮ້ອງໃຫ້ມີຜູ້ດູແລຮັກສາ. ຊຸກຍູ້ກັນແລະກັນ ໃຫ້ສົ່ງເສີມຂັ້ນມາຕຖານເຫລົ່ານີ້.

11. ພຍາຍາມບອກແຈ່ມແຈ້ງວ່າທ່ານສນັບສນູນນະໂຍບາຍ ແລະ ກົດລະບຽບຕ່າງໆທີ່ສ້າງຂຶ້ນ ແລະ ສົ່ງເສີມໃຫ້ໂຮງຮຽນເປັນບ່ອນປອດພັຍສຳຫລັບຮ່ຳຮຽນຂອງພວກນັກຮຽນທຸກໆຄົນ. ຖ້າເດັກຂອງທານຮູ້ສຶກວາກົດລະບຽບນັ້ນຜິດ, ສົນທະນາເຫດຜົນຕາງໆຂອງເດັກ ແລະ ຈະມີລະບຽບແນວໃດຈຶ່ງຈະເໝາະສົມດີ.

12. ເຂົ້າຮ່ວມກັບພວກພໍ່ແມ່ຄົນອື່ນໆ, ໂດຍຜ່ານທາງສະມາຄົມໃນໂຮງຮຽນ ແລະ ເຂດຄຸ້ມບ້ານໃກ້ຄຽງ, ການຈັດທາງສາສນາ, ກຸ່ມການເມືອງ, ແລະ ກຸ່ມກິຈກັມຕາງໆຂອງຊາວໜຸ່ມ. ໂອ້ລົມກັນກຽວກັບບັນຫາຄວາມຮຸນແຮງຕາງໆ, ບັນຫາກຽວກັບຊາວໜຸ່ມຢູ່ໃນຊຸມຊົນ, ທາງອອກຕາງໆເພື່ອຊ່ອຍໃຫ້ພໍ່ແມ່ມີຄວາມຮູ້ຄວາມສາມາດ ເຂັ້ມແຂງ ແລະ ຄອງແຄ້ວໃນການສິດສອນລ້ຽງດູລູກ, ແລະ ເພື່ອໃຫ້ຮູ້ຈັກຄຸ້ນເຄີຍກັບບັນຫາຕາງໆ.

*ບົດຄວາມອັນນີ້ໃຫ້ມາ ແລະ ພິມໂດຍຮັບອະນຸຍາດຈາກສະພາປ້ອງກັນພັຍຂອງຊາດ ©.*
*ລາຍລະອຽດເພີ້ມກ່ຽວກັບ ສະພາປ້ອງກັນພັຍຂອງຊາດນີ້ ຂໍໃຫ້ອ່ານທີ່* (www.ncpc.org).
*ລາຍລະອຽດເພີ້ມກ່ຽວກັບ ເຈົ້າໜ້າທີ່ຕຳຣວດບໍຣິການເມືອງແຊນດີເອໂກ, ຂໍໃຫ້ອ່ານທີ່* (*http:prod031.sandi.net/policeservices/*).
*ອະພິນັນທະນາການຄາພິມຈາກມູນນິທິ Annie E. Casey Foundation*

ເພື່ອລາຍລະອຽດຕິດຕໍ່ຫາ: Police Services Department: (619) 725-7000 Administration (619) 291-7678

**www.sandi.net**